ຂອງພວກເຂົາເວົ້າໃນສິ່ງທີ່ໂຕເອງບໍ່ຮູ້ຈັກຫັຽງ. ຈະເປັນການດີກວ່າ ທີ່ຈະພະຍາຍາມ ອະທິບາຍ ຢ່າງໃຈເຢັນ (ໃຊ້ຂໍ້ມູນທີ່ກ່າວມາຂ້າງບົນນີ້) ວ່າ ກັນຊາກໍ ບໍ່ແມ່ນວ່າຈະ ບໍ່ ມີຜົນ ຮ້າຍເລີຍ. ບໍ່ເປັນຄວາມຈິງທີ່ວ່າ ການບອກຄວາມຈິງແກ່ພວກວັຍຣຸ່ນກ່ຽວກັບຢາເສບຕິດຈະຍົວະໃຫ້ເຂົາໃຊ້ຢາເສບຕິດ - ຄວາມຈິງມີຢູ່ວ່າ ກັນຊາໃນ ປັດຈຸບັນນີ້ ກໍມີ ຫຼວງ ຫຼາຍ ສຳລັບ ວັຍຣຸ່ນ ແລະ ພວກເຂົາ ກໍອາດ ຕັດສິນໃຈ ທີ່ຈະລອງມັນ. ນີ້ກໍໝາຍຄວາມວ່າ ພວກເຂົາ ຕ້ອງການ ຄວາມຮູ້ທີ່ຖືກຕ້ອງ ກ່ຽວກັບຢາເສບຕິດ ເພື່ອປ້ອງກັນພວກເຂົາເອງ ຈາກ ພັຍອັນນີ້.

**ເຮົາຈະຮູ້ໄດ້ຢ່າງໃດວ່າວັຍຣຸ່ນສູບກັນຊາ?** ເຖິງວ່າ ການຂາດໂຮງຮຽນ, ຜົນການຮຽນ ຕົກ ແລະນິດສັຍໃຈຄໍ ປ່ຽນແປງໄປ ຈະເປັນອາການ ຂອງຄົນໃຊ້ກັນຊາ, ແຕ່ອາການ ດັ່ງກ່າວກໍແມ່ນບັນຫາປົກກະຕິທົ່ວໆໄປຂອງພວກວັຍຣຸ່ນເຊັ່ນກັນ, ດັ່ງນັ້ນ ຈຶ່ງບໍ່ຄວນດ່ວນ ສລຸບຜົນເອົາໂລດ. ຖ້າທ່ານສົງໃສວ່າ ລູກຫຼານຂອງທ່ານໃຊ້ ກັນຊາ ຫຼື ພົບຫຼັກຖານ ວ່າ ເຂົາເຈົ້າໃຊ້ຢາເສບຕິດແທ້ ທ່ານອາດຈະຢາກຂູ່ ຫຼື ລົງໂທດເຂົາ. ແຕ່ທາງທີ່ດີ ຄວນ ໃຈເຢັນໄວ້ກ່ອນ ແລະ ພະຍາຍາມ ສືບໃຫ້ຮູ້ວ່າ ເປັນຫັຽງເຂົາຈຶ່ງໃຊ້ ຢາເສບຕິດ. ພວກ ວັຍຣຸ່ນ ຕ້ອງການຢາກຮູ້ວ່າ ພໍ່ແມ່ຮັກເຂົາ ແລະ ຢາກຊ່ວຍເຂົາ. ຄວາມຈິງທີ່ວ່າພວກເຂົາ ໃຊ້ຢາເສບຕິດ ອາດໝາຍຄວາມວ່າ ເຂົາກຳລັງມີບັນຫາ - ແຕ່ມັນກໍ ອາດ ຈະ ໝາຍ ຄວາມວ່າ ເຂົາພຽງແຕ່ ລອງຄັ້ງດຽວ ແລະ ຈະບໍ່ລອງອີກເລີຍ. ຫາກທ່ານເປັນຫ່ວງກ່ຽວກັບ ລູກຫຼານ ທີ່ໃຊ້ຢາເສບຕິດ, ກໍບໍ່ຄວນລັງເລໃຈໃນການໄປຂໍຄວາມຊ່ວຍເຫຼືອ. ບັນຫາຢາ ເສບຕິດເປັນບັນຫາອັນດຽວກັນສຳລັບພໍ່ແມ່ຫຼາຍໆຄົນ ແລະ ບໍ່ມີຫັຽງເປັນໜ້າອັບອາຍເລີຍ - ແລະການໄດ້ຮັບຄວາມຊ່ວຍເຫຼືອແຕ່ຕົ້ນອາດຈະປ້ອງກັນບັນຫາຮ້າຍແຮງກວ່າເກົ່າ ທີ່ ອາດຕາມມາພາຍຫຼັງໄດ້. ຖ້າທ່ານຕ້ອງການຄຳແນະນຳ ເພີ້ມເຕີມ ກະຣຸນາຕິດຕໍ່ສູນກາງ ສຶກສາ ນາໆວັທນະທັມ ເຣື່ອງຢາເສບຕິດແລະເຫຼົ້າ (Drug and Alcohol Multicultural Education Centre) ເບີໂທຣ (02) 9699 3552, ຫຼື ທີ່ສູນສຸຂພາບໃນເຂດ ທ້ອງຖິ່ນ ຂອງທ່ານ.

**NSW Multicultural Health Communication Service**
**website: http://mhcs.health.nsw.gov.au**
**e-mail: mhcs@sesahs.nsw.gov.au**

multicultural communication

Laotian
1 March 1999
[BHC-5135]

# ກັນຊາ ມີຜົນຮ້າຍ ຫຼາຍປານໃດ?

## How harmful is cannabis?

REVIEWED November 2004
NSWMulticulturalHealthCommunicationService

NSW HEALTH
DEPARTMENT

# ກັນຊາ ມີຜົນຮ້າຍ ຫຼາຍປານໃດ?

## How harmful is cannabis?

ເຖິງວ່າ ປະມານ ໕໐ ເປີເຊັນ ຂອງຄົນທີ່ມີອາຍຸ ຕ່ຳກ່ວາ ໑໗ ປີ ເຄີຍໄດ້ລອງໃຊ້ ກັນຊາ ມາແລ້ວ, ແຕ່ນີ້ກໍບໍ່ໄດ້ ໝາຍຄວາມວ່າ ວັຍຣຸ້ນທຸກຄົນຈະລອງມັນ - ແລະ ກໍບໍ່ໄດ້ໝາຍຄວາມວ່າ ວັຍຣຸ້ນໝົດທຸກຄົນ ທີ່ໄດ້ສູບກັນຊາມາແລ້ວ ຈະມີ ບັນຫາກັບ ກັນຊາ ຈົນໝົດ. ການທົດລອງສິ່ງໃໝ່ໆ ແມ່ນສ່ວນໜຶ່ງ ຂອງການເຕີບໂຕ ຂອງ ວັຍຣຸ້ນ ແລະເນື່ອງຈາກວ່າ ຄົນໜຸ່ມທົດລອງ ຢາເສບຕິດບາງຢ່າງ (ຮວມທັງເຫຼົ້າ ແລະ ຢາສູບ) ກໍບໍ່ໄດ້ໝາຍ ຄວາມວ່າພວກເຂົາຈະກະທຳຕໍ່ໆໄປ. ຄົນໜຸ່ມທີ່ມາຈາກພື້ນຖານຄອບຄົວແລະວັທນະທັມຕ່າງໆ ກັນໄດ້ທົດລອງກັນຊາ - ມັນບໍ່ເປັນຄວາມຈິງ ທີ່ວ່າ ຈຳເພາະແຕ່ ວັຍຣຸ້ນ ທີ່ ມີບັນຫາ ຫຼືຜູ່ທີ່ມາຈາກບາງຄອບຄົວ ເທົ່ານັ້ນ ທີ່ຈະໃຊ້ ກັນຊາ. ດຽວນີ້ ສຳລັບວັຍຣຸ້ນສ່ວນຫຼາຍ, ການໃຊ້ກັນຊາ ເຫັນວ່າເປັນຂອງ "ທັມມະດາ". ປະມານ ນຶ່ງສ່ວນສາມ ຂອງຜູ່ໃຫຍ່ ທີ່ພົ້ນກະສຽນແລ້ວ ຢູ່ໃນ ອອສເຕຣເລັຍກໍເຄີຍໄດ້ລອງກັນຊາມາແລ້ວ.

**ເປັນຫຍັງພວກ ວັຍຣຸ້ນ ຈຶ່ງໃຊ້ ກັນຊາ ?** ແມ່ນເຫດຜົນ ອັນດຽວກັນ ກັບຜູ່ໃຫຍ່ ທີ່ໃຊ້ ເຄື່ອງເສບຕິດທີ່ຕົນມັກ, ເຊັ່ນເຫຼົ້າ - ພວກເຂົາຄິດວ່າ ມັນມ່ວນ ແລະ ມັນເຮັດໃຫ້ ເຂົາມີ ຄວາມຮູ້ສຶກທີ່ດີແລະຜ່ອນຄາຍ. ພວກເຮົາໃນຖານະ ພໍ່ແມ່ ແລະ ພໍ່ເຖົ້າແມ່ເຖົ້າ ຊຶ່ງມີ ບັນຫາຕ່າງໆຂອງເຮົາເອງ, ບາງຄັ້ງ ພວກເຮົາກໍລືມໄປວ່າ ການເປັນວັຍຣຸ້ນເປັນຊ່ວງ ເວລາທີ່ຍາກ, ແລະ ນັ້ນກໍເປັນຂອງທັມມະດາ ທີ່ວັຍຣຸ້ນ ຈະຮູ້ສຶກ ຢາກຮ້າຍ, ຮູ້ສຶກຄັບ ແຄ້ນໃຈ ຫຼືບາງຄັ້ງກໍຮູ້ສຶກກົດດັນ. ດ້ວຍເຫດນີ້, ມັນຈຶ່ງບໍ່ເປັນການແປກ ທີ່ພວກໜຸ່ມບາງຄົນ ຈະໃຊ້ຢາທີ່ຫາໄດ້ງ່າຍ ແລະ ຢ່າງນ້ອຍ ມັນກໍເຮັດໃຫ້ພວກເຂົາ ຮູ້ສຶກດີຂຶ້ນຊົ່ວລະຍະນຶ່ງ.

**ກັນຊາມີລັກສນະເປັນແນວໃດ ?** Marijuana (ສັບນີ້ ມີຄວາມໝາຍ ວ່າ ຫຍ້າແຫ້ງ) ຄືກັນກັບດອກໄມ້ແຫ້ງທີ່ມີສີຂຽວແກ່. ສ່ວນຫຼາຍເມື່ອຊື້ມາ ຈະຢູ່ໃນຖົງຢາງນ້ອຍ ທີ່ຮູດຕິດເຂົ້າກັນເອງໄດ້. Hashish (ຢາງທີ່ເຮັດມາຈາກຍອດດອກໄມ້ແຫ້ງ) ຄືກັນກັບລູກກົມ ຫຼື ກ້ອນສີ່ລ່ຽມ ນ້ອຍໆ ໜຽວໆ ສີນ້ຳຕານແກ່ ຫຼື ສີດຳ. ຄົນໜຸ່ມສ່ວນຫຼາຍ ຈະສູບ ກັນຊາທີ່ປົນໃສ່ກັບ ຢາສູບ, ໂດຍໃຊ້ທໍ່ຢາງເຮັດເປັນບັ້ງສູບ. ບັ້ງກັນຊານີ້ ສ່ວນຫຼາຍ ຈະ ເຮັດ ຈາກການເຈາະຮູໃສ່ແກ້ວນ້ຳອັດລົມທີ່ເປັນຢາງ ແລະ ສຸບສົ້ນນຶ່ງສັ້ນໆ ຂອງທໍ່ທົດນ້ຳໃສ່. Marijuana ໃຊ້ປົນກັບຢາເສັ້ນ ເພື່ອເຮັດຢາສູບ ກໍມີ.

**ກັນຊາ ມີຜົນຮ້າຍຫຼາຍປານໃດ ?** ເຖິງວ່າ ກັນຊາ ຈະເຮັດໃຫ້ມີ ບັນຫາ ທາງສຸຂພາບໜ້ອຍກ່ວາເຄື່ອງເສບຕິດຊນິດອື່ນໆ, ຮວມທັງເຫຼົ້າ ແລະ ຢາສູບ, ກໍບໍ່ແມ່ນວ່າມັນຈະບໍ່ມີພັຍເລີຍ. ກັນຊາສ່ວນໃຫຍ່ ທີ່ໃຊ້ສູບ ຢູ່ໃນທຸກວັນນີ້ ກໍຈະ ປຸກກວ່າ ກັນຊາ ທີ່ໃຊ້ສູບເມື່ອ ໔໐ ປີກ່ອນ. ບາງຄົນເຊື່ອວ່າ ການສູບກັນຊາ ຈະປອດພັຍກວ່າ ຢາສູບ, ແຕ່ເຖິງວ່າ ມັນຈະເຮັດໃຫ້ຄົນຕິດໜ້ອຍກວ່າຢາສູບ, ຄົນຈຳນວນຫຼາຍກໍຕິດ ກັນຊາ ເລະ ຮູ້ສຶກ ວ່າມັນຍາກທີ່ຈະຕັດຂາດໄດ້. ການສູບກັນຊາຢ່າງໜັກແລະສູບເປັນເວລາຍາວນານ ກໍອາດຈະເຮັດໃຫ້ເປີເຊັນໃນການເປັນພະຍາດທາງປອດສູງຂຶ້ນໄດ້. ສິ່ງທີ່ໜ້າວິຕົກອີກຢ່າງນຶ່ງ ຫາກໃຊ້ ກັນຊາ ທຸກໆມື້ ຫຼື ຫຼາຍໆຄັ້ງຕໍ່ອາທິດ ກໍຄື ມັນອາດຈະ ກະທົບກະເທືອນ ຄວາມສາມາດ ໃນການຮຽນ ແລະ ຄວາມຊົງຈຳ ສິ່ງຂອງຕ່າງໆ. ເຖິງວ່າການກະທົບກະເທືອນຈະບໍ່ຮ້າຍແຮງ, ແຕ່ມັນອາດຈະລົບກວນການຮຽນໄດ້. ເຖິງຢ່າງໃດກໍຕາມ ບັນຫານີ້ກໍຄວນຈະຫາຍໄປ ຫຼັງຈາກຄົນຜູ່ນັ້ນ ງົດໃຊ້ຢາເສບຕິດຊນິດນີ້ໄປລະຍະນຶ່ງ. ກັນຊາກໍ່ໃຫ້ເກີດໂຣກຈິດບໍ່ ? ຜູ່ຊ່ຽວຊານສ່ວນຫຼາຍ ເຊື່ອວ່າ ກັນຊາບໍ່ແມ່ນສາເຫດ - ແຕ່ມັນຈະກະຕຸ້ນບັນຫານີ້ ຫາກວ່າຄົນພວກນັ້ນ ເຄີຍມີບັນຫາ ທາງໂຣກຈິດ ຢູ່ກ່ອນແລ້ວ. ການໃຊ້ຢ່າງສມ່ຳສເມີ ກໍສາມາດກໍ່ໃຫ້ເກີດຄວາມກະວົນກະວາຍ ແລະ ຄວາມສັບສົນ ສຳລັບບາງຄົນໄດ້. ຄົນໜຸ່ມບາງພວກໃຊ້ກັນຊາປະສົມກັບຢາເສບຕິດຜິດກົດໝາຍ ອີກຊນິດນຶ່ງ ຊຶ່ງຮ້ອງວ່າ LSD ຫຼື "trips" - ອັນນີ້ຖືວ່າເປັນອັນຕະຣາຍ ແລະ ອາດເຮັດໃຫ້ເກີດ ໂຣກຈິດຢ່າງ ຮ້າຍແຮງສຳລັບບາງຄົນໄດ້.

**ພໍ່ແມ່ຄວນບອກວັຍຣຸ້ນກ່ຽວກັບກັນຊາວ່າຢ່າງໃດ ?** ກ່ອນຈະສົນທະນາ ກ່ຽວກັບ ເຣື່ອງຢາເສບຕິດ ກັບພວກ ວັຍຣຸ້ນ ຕ້ອງຫາ ຂໍ້ມູນ ທີ່ຖືກຕ້ອງໄວ້ກອ່ນ. ຄົນໜຸ່ມສ່ວນຫຼາຍ ຈະຮູ້ກ່ຽວກັບຢາເສບຕິດທີ່ຜິດກົດໝາຍຫຼາຍກວ່າພໍ່ແມ່ - ແລະ ຖ້າຫາກ ພໍ່ແມ່ ເວົ້າກ່ຽວກັບຢາເສບຕິດທີ່ບໍ່ຖືກຕ້ອງ, ພວກເຂົາ ອາດຈະບໍ່ເຊື່ອໃນ ສິ່ງອື່ນໆ ທີ່ພໍ່ແມ່ບອກເຂົາ. ບາງເທື່ອພໍ່ແມ່ກໍອົດບໍ່ໄດ້ທີ່ຈະເວົ້າເຣື່ອງຜົນຮ້າຍແລະບັນຫາສັງຄົມກ່ຽວກັບການໃຊ້ ຢາເສບຕິດຈົນເກີນຄວາມເປັນຈິງ ດ້ວຍຫວັງວ່າຈະເຮັດໃຫ້ ພວກວັຍຣຸ້ນ ຢ້ານ ແລະ ບໍ່ໄປໃກ້ກັບຢາເສບຕິດນັ້ນ, ແຕ່ວິທີນີ້ສ່ວນຫຼາຍ ມັນຈະ ໃຊ້ ບໍ່ຄ່ອຍໄດ້ຜົນ. ຖ້າຫາກພວກ ວັຍຣຸ້ນ ເຫັນໝູ່ເຂົາໃຊ້ ກັນຊາ ແລະ ບໍ່ໄດ້ເກີດຜົນຮ້າຍທີ່ ຈິງຈັງ, ພວກເຂົາກໍຈະຄິດວ່າ ພໍ່ແມ່